ຂອງອາຊຍາສິທຈຶ່ງຈັບຕົວນາຍຄຳເກົ້. ເວລານີ້ນາຍຄຳຖືກກັກຂັງຢູ່ຄຸກເມືອງຊຽງຂວາງແລ້ວ.

ເສັຽຊີວິຕເດັກ.- ວັນທີ ໑໓ ຊັງວິເອີ ຕົນພົບຖົບເລຂທີ ກ ເກືອບລົ້ມທັບກຸລີ ອັນນານ ສອງຄົນຈຶ່ງເຣັດການທີ່ທາງຂ້າງເມືອງສຸຍບັນ. ຕູ້ທີ່ໜຶ່ງຕາຍກັບທີ່ ຕູ້ທີ່ສອງເຖິງໂຮງພຍາບາລໄດ້ ໓ ວັນເລີຍຕາຍ.

ນາຍໂນ ມິດ ບັນພຽງໂພ ຕາແສງລານເມືອງຄຳອາຍຸ ໑໘ ປີຕົກກົກໝາກມີ້ ຕາຍເປັນໃນວັນທີ ໖ ຊັງວິເອີ.

ໄດ້ຮັບດວງຕາ.- ເຈົ້າເຫຼັກເຈົ້າແຂວງຊຽງຂວາງໄດ້ຮັບດວງຕາປະເທສຂເນຣຈັນອອພີຊີເອີ:

ເຈົ້າເມືອງທ້າວຕານແລະຄຳອ້ວນໄດ້ຮັບດວງຕາຈະນິຕຍອກັນຈັນເຊວາລີເອີ.

ການປົກດົງ.- ຝ້າຍທີ່ເມືອງຄຳປີນີ້ເກັບໄດ້ ໔໐໐ ໝື່ນ. ສຳຫຼັບປຸກປີໜ້າ ລາຊະການໄດ້ສົ່ງແກ່ນຝ້າຍເປັນໃຫ້ອີກ ໖໐໐ ກິໂລກຼາມທີ່ເອົາມາຈາກແຂວງທາດົງ.

---

### ຂ່າວກອງເມືອງຫຼວງນ້ຳທາ ແຂວງຫົວຂອງ

ເຮົາໄດ້ຊາບຂ່າວວ່າຕົວຄວາມຂບັນຊັນແຂງຂອງທ້າວຫອມ



## ບຸນຄຸນຂອງປະເທສ ຝລັ່ງເສສ

ເຮົາຍ່ອມຊາບທຸກຄົນວ່າບຸນຄຸນທີ່ປະເທສຝລັ່ງເສສມີແກ່ປະເທສເຮົານັ້ນ ກ່ຽວຢູ່ໃນການສ້າງຖນົນຫົນທາງ, ສະພານ, ທາງລົດໄຟ, ໂຮງຮຽນ, ໂຮງພຍາບາລ..ໃນການສ້າງເມືອງເຮົາໃຫ້ເປັນທີ່ງົດງາມແລະໄດ້ດ້ວຍເພີ້ນ, ໃນການປະຕິສັງຂຣໂບຮານສະຖານ, ໃນການສ້າງການເປັນສະນີຍ໌ ໂທລະເລຂ ໂທລະສັພທ໌ໆໆການປິ່ນແປງຢ່າງສຳເຫຼັຈຜົລຈຳເຣີນຂຶ້ນໃນທຸກປະເທສແຫ່ງອິນໂດຈີນນີ້ ເປັນບຸນຄຸນທີ່ເຮົາເປັນຫນີ້ລັຖະບາລຕູ່ປົກປັກຮັກສາເຮົາ. ສິ່ງເຫຼົ່ານີ້ໃຫ້ຄວາມສຸຂກາຍສະບາຍໃຈແກ່ເຮົາຕາມຄວາມປະສົງ. ເຮົາຂໍຍົກຕົວຢ່າງຄືການປະຕິສັງຂຣທາດຫຼວງວຽງຈັນທາບໃນປີ ໑໙໓໕ ແລະວັດພຣະແກ້ວໃນປີ ໑໙໔໖ ໄດ້ທຳຄວາມຊົມຊື່ນຍິນດີແກ່ຊົນຊາຕລາວທົ່ວໄປ. ຊາວລາວມີຄວາມກະຕັນຍູຕໍ່ລາຊະການຝລັ່ງເສສ. ພຣະບາທສົມເດັຈພຣະເຈົ້າສີສວ່າງວົງສ໌, ເຈົ້າລັຊຊະທາຍາດສວ່າງວັທທະນາແລະພຣະອົງຄ໌ເຈົ້າມະຫາອຸປະຮາຊເພັຊະລາຊທີ່ໄດ້ຊົງຣູ້ປະຖັມການປະຕິບັດງານຖາວຣນີ້ຈຶ່ງເປັນຜົລສຳເຣັຈຢ່າງດີງາມ.

ການໂຄສະນາຊວນເຊື່ອຂອງຕ່າງປະເທສຈົ່ງວ່າຊາວຝລັ່ງເສສ